**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສູນກາງພັກ
ກົມບໍລິຫານ

ເລກທີ 75 /ກບຫ
ນະຄອນຫຼວງວຽງຈັນ, ວັນທີ 3ເມສາ 2026

# ແຈ້ງເຊີນ

**ເຖິງ :** ບັນດາບໍລິສັດຮັບເໝົາກໍ່ສ້າງອາຄານ ທີ່ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍແຫ່ງ ສປປ ລາວ
**ເລື່ອງ:** ເຂົ້າຮ່ວມ ເຂົ້າຍື່ນຊອງປະມູນສຳລັບໂຄງການ ປະຕິສັງຂອນ ເຂດອານຸສອນສະຖານ ທ່ານ ໜູຮັກ ພູມສະຫວັນ ຂອງຫ້ອງວ່າການສູນກາງພັກ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມບໍລິຫານ, ສະບັບເລກທີ 394/ຫສພ ລົງວັນທີ18 ກໍລະກົດ 2023.
- ອີງຕາມ ຂໍ້ຕົກລົງຂອງ ຫົວໜ້າຫ້ອງວ່າການສູນກາງພັກ ສະບັບເລກທີ 47/ຫສພ, ລົງວັນທີ 30 ມັງກອນ 2026, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງ ຫ້ອງວ່າການ ສູນກາງພັກ ປະຈຳປີ 2026.
- ອີງຕາມ ແຜນການຈັດຕັ້ງປະຕິບັດໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງ ຫ້ອງວ່າການສູນກາງພັກ ປະຈຳປີ 2026;

ກົມບໍລິຫານ ຫ້ອງວ່າການສູນກາງພັກຂໍເຊີນມາຍັງບັນດາບໍລິສັດທີ່ສົນໃຈ ແລະມີມາດຖານຄົບຖ້ວນ ເຂົ້າຍື່ນຊອງປະມູນສຳລັບໂຄງການປະຕິສັງຂອນ ເຂດອານຸສອນສະຖານ ທ່ານ ໜູຮັກ ພູມສະຫວັນ ຂອງຫ້ອງວ່າການສູນກາງພັກ ໄລຍະການສ້ອມແປງ ຈຳນວນ 7 ເດືອນ.

1. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ0477/ກງ,ລົງວັນທີ 13 ກຸມພາ 2019.
2. ການປະມູນນີ້ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີມາດຖານຄົບຖ້ວນ,ມີໃບອະນຸຍາດດຳເນີນທຸລະກິດປະຈຳປີ 2025 (ປະຕູຊັ້ນໜຶ່ງ), ໃບທະບຽນວິສາຫະກິດ ຖືກຕ້ອງຕາມກົດຫມາຍ, ໃບມອບພັນທະອາກອນປະຈຳປີ 2025

❖ **ຊຶ່ງຂັ້ນຕອນ ແລະ ລາຍລະອຽດຂອງການປະມູນ ມີດັ່ງລຸ່ມນີ້:**

1. ບໍລິສັດໃດທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ພະແນກເຄຫາ-ຊັບສິນ, ກົມບໍລິຫານ ຫ້ອງວ່າການສູນກາງພັກ.
2. ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວຕ້ອງຍື່ນຫນັງສືສະເຫນີຫາທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ **03 ເມສາ ຫາ ວັນທີ 13 ພຶດສະພາ 2026** ເປັນຕົ້ນໄປ, ໃນລາຄາ **3.000.000 ກີບ/ຊອງ**, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.

3. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາວັນທີ..14..ພຶດສະພາ 2026 ແລະ ສະຖານ ທີ່ ທີ່ກຳນົດໃນການຍື່ນຊອງປະມູນ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ພິຈາລະນາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ..9..:..00..ໂມງ ວັນທີ ແລະ ສະຖານທີ່ ທີ່ກຳນົດໄວ້ການຍື່ນຊອງປະມູນ ໂດຍຊ້ອງໜ້າຄະນະກຳມະການປະມູນແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.
4. ການຄ້ຳປະກັນຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນດ້ວຍເຊັກ ຫລື ເງິນສົດ ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ(ເງິນຄ້ຳ 2% ຈະຖືກສົ່ງຄືນໃຫ້ບໍລິສັດທີ່ບໍ່ຊະນະການປະມູນພາຍຫຼັງເປີດຊອງ 35 ວັນ).

❖ **ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວຕ້ອງໄດ້ປະຕິບັດຕາມຂັ້ນຕອນການປະມູນ ຄື:**

1. ປະກອບເອກະສານໃຫ້ຄົບຖ້ວນ.
2. ສຳລັບມື້ເປີດຊອງປະມູນຈະແຈ້ງຕາມພາຍຫຼັງ.
3. ຖ້າໄດ້ຮັບການຄັດເລືອກຈະໄດ້ເຊັນສັນຍາຮ່ວມງານກັນ.

ຖ້າບໍລິສັດໃດທີ່ມີຄວາມສົນໃຈເຂົ້າມາຍື່ນເອກະສານ ແລະ ເຈດຈຳນົງຊື້ຊອງປະມູນ ໃນໂມງລັດຖະການ ທີ່ຢູ່ (ພະແນກເຄຫາ-ຊັບສິນ, ກົມບໍລິຫານ, ຫ້ອງວ່າການສູນກາງພັກ, ທີ່ຕັ້ງບ້ານສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ (ຫຼັກ 6), ໂທ 021 840195, 020 99802776, 020 23456557.

**ຫົວໜ້າກົມ**

(ເຈົ້າຂອງໂຄງການ)

ຫ້ອງວ່າການສູນກາງພັກ
ກົມບໍລິຫານ

**ນ. ເກສອນ ວໍລະເພັດ**

**ບ່ອນສົ່ງ:**

- ສົ່ງຕາມເປົ້າໝາຍ 01 ສະບັບ.
- ກົມບໍລິຫານ 01 ສະບັບ.
- ພະແນກກ່ຽວຂ້ອງ 01 ສະບັບ.
- ສຳເນົາ 01 ສະບັບ.